ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 30 ກໍຣະກົດ 2006 (7-30-2006)

## <u>ຂ້າພະເຈົ້າຈະເຊື່ອຟັງພຣະບັນຍັດຂອງພຣະເຈົ້າ</u>

<u>**ຂໍ້ພຣະຄັມພີໃນບົດຮຽນ:**</u> ພຣະທັມ ອົບພະຍົບ 19:4-6; 20:3-17

<u>**ພຣະຄັມພີແຫ່ງຄວາມຈິງ:**</u> ພຣະເຈົ້າຊົງພຣະບັນຊາໃຫ້ຜູ້ທີ່ເຊື່ອນະມັສການພຣະອົງຢ່າງພິເສດແລະດຳເນີນຊີວິດຢູ່ໃນຄວາມໝັ້ນຄົງກັບພຣະລັກສະນະຂອງພຣະອົງ.

<u>**ຜົນສະທ້ອນຕໍ່ຊີວິດ:**</u> ບົດຮຽນນີ້ຈະຊ່ອຍທ່ານໃຫ້ສະແດງອອກເຖິງການເພິ່ງພາໃນພຣະເຈົ້າໂດຍ...

- ການອະທິບາຍເຖິງຜົນປໂຍດທີ່ໄດ້ຮັບຈາກການເຊື່ອຟັງພຣະບັນຊາຂອງພຣະເຈົ້າ ແລະ...
- ຍອມຮັບວ່າ ທ່ານຕ້ອງການພຣະຄຸນແລະການໃຫ້ອະພັຍຈາກພຣະເຈົ້າເມື່ອທ່ານລະເມີດຕໍ່ການເຊື່ອຟັງ.

### <u>ພຣະເຈົ້າຫວັງສິ່ງໃດຈາກຂ້າພະເຈົ້າ?</u>

ໃນປື້ມຂອງ ຈ໊ອດ ບາຣ໌ນາ ປີ 2003 ທີ່ມີຊື່ວ່າ "**ຄິດເໝືອນອົງພຣະເຢຊູ**" ໄດ້ກ່າວເຖິງການໂອ້ລົມກັນກັບ ບິລ ເຣື່ອງສະພາບຂອງສິລທັມໃນສັງຄົມອະເມຣິກັນ. ບິລ ເວົ້າວ່າພຣະຄັມພີບໍ່ໄດ້ກຳນົດເຣື່ອງສິລທັມທີ່ແນ່ນອນໄວ້. ລາວເວົ້າວ່າ "*ຊີວິດແມ່ນການກະທຳໃນສິ່ງທີ່ເຮັດໃຫ້ເຈົ້າເກີດຄວາມສຸກແລະສຳເຣັດໃນສິ່ງທີ່ເຈົ້າປາຖນາແລະໄດ້ມາໃນສິ່ງທີ່ເຈົ້າຢາກຈະໄດ້.*" ລາວໄດ້ເວົ້າຕື່ມອີກວ່າລາວໄດ້ເຮັດໃນສິ່ງທີ່ລາວເຫັນວ່າຖືກຕ້ອງແລະຕັດສິນໃຈຈາກປະສົບການຊີວິດຂອງລາວ. ບິລ ຍັງໄດ້ເວົ້າອີກວ່າ "*ໂລກນີ້ເຕັມໄປດ້ວຍຕົວຢ່າງທັງດີແລະຊົ່ວ, ຖ້າຫາກເຈົ້າເອົາໃຈໃສ່ ເຈົ້າກໍຈະຮູ້ວ່າສິ່ງໃດດີແລະສິ່ງໃດຊົ່ວ.*"

ທ່ານອາດຈະຮູ້ຈັກຫລາຍຄົນທີ່ມີຄວາມຄິດແບບດຽວກັນນີ້. ການຄົ້ນຄວ້າຂອງ ບາຣ໌ນາ ໄດ້ພົບວ່າ, "ມີພຽງແຕ່ 14 ສ່ວນຮ້ອຍຂອງຜູ້ໃຫຍ່ທີ່ບັງເກີດໃໝ່ແລ້ວ ໄດ້ເພິ່ງໃນພຣະຄັມພີເໝືອນກັບເຂັມຊີ້ທິດໃນເຣື່ອງສິລທັມ ແລະເຊື່ອວ່າຄວາມຈິງດ້ານສິລທັມນັ້ນແນ່ນອນ"

ພື້ນຖານການຕັດສິນໃຈຂອງ ບິລ ໄດ້ຊີ້ໃຫ້ເຫັນຄົນຈຳນວນຫລາຍໃນທຸກວັນນີ້ ໄດ້ຕັດສິນໃຈຂອງເຂົາເຈົ້າ. ບາງຄົນໄດ້ຕັດສິນໃຈເຣື່ອງສິລທັມເທິງພື້ນຖານທີ່ວ່າແມ່ນຫຍັງກໍໄດ້ ທີ່ຈະເຮັດໃຫ້ເກີດຜົນດີຕໍ່ຄອບຄົວຂອງເຂົາເຈົ້າ. ຂ້າພະເຈົ້າຮູ້ຜູ້ຍິງຄົນນຶ່ງດີ, ເຖິງແມ່ນວ່າລາວບໍ່ແມ່ນຄຣິສຕຽນທີ່ມີຄວາມເຊື່ອແຕ່ລາວອ້າງວ່າການອ້ອນວອນເປັນສ່ວນນຶ່ງໃນຊີວິດຂອງລາວ. ລູກຂອງລາວຫລາຍຄົນເປັນຄຣິສຕຽນໄດ້ໄປໂບດເປັນປະຈຳບໍ່ຂາດ. ຂ້າພະເຈົ້າຮູ້ຈັກຜູ້ຍິງຄົນນັ້ນວ່າລາວເປັນຄົນຂີ້ຕົວະ, ຂີ້ລັກ, ແລະເຮັດຜິດຊາຍຍິງ ເພາະລາວຄິດວ່າການກະທຳເຫລົ່ານີ້ເປັນຜົນດີຕໍ່ລູກໆ ຂອງລາວ.

ໃນປັດຈຸບັນນີ້ ຄົນອະເມຣິກັນຕ້ອງການເຂັມຊີ້ທິດທາງສິລທັມເໝືອນກັບຊາວອິສຣາເອນທີ່ຕ້ອງການເປັນເວລາປະມານ 3500 ປີຜ່ານມາແລ້ວ. ຂໍ້ພຣະຄັມພີຕອນນຶ່ງໃນຫລາຍໆ ບົດທີ່ກ່າວໄວ້ໃນພຣະຄັມພີ. ພຣະເຈົ້າຊົງມີເຂັມຊີ້ທິດນັ້ນໄວ້ແລ້ວສຳລັບມະນຸດທັງໂລກໃນທຸກຍຸກທຸກສມັຍ. ຈາກພຣະບັນຍັດສິບຂໍ້ສັ້ນໆ, ພຣະເຈົ້າຊົງໄດ້ກ່າວໄວ້ຢ່າງບໍ່ມີຜິດພາດເພື່ອເປັນພື້ນຖານດ້ານສິລທັມຊຶ່ງໄດ້ແກ່ ຈົ່ງອຸທິດຕົນຕໍ່ພຣະເຈົ້າ, ໃຫ້ກຽດບິດາມານດາ, ແລະນັບຖືຄົນທົ່ວໄປໃນສັງຄົມ. ພວກເຮົາເປັນໄພ່ພົນຂອງພຣະອົງ, ແລະນີ້ແມ່ນຈຸດສຳຄັນທີ່ພຣະອົງຕ້ອງການຈາກພວກເຮົາ.

# <u>ສຶກສາພຣະຄັມພີ</u>

## 1. <u>ຊົງຮຽກເອີ້ນມາສູ່ຄວາມສັມພັນພິເສດ</u>( ອົບພະຍົບ 19:4-6 )

ພຣະທັມອົບພະຍົບບົດທີ 1-18 ແມ່ນການຈັດຕຽມຕໍ່ພັນທະສັນຍາທີ່ກ່າວໄວ້ໃນບົດທີ 19-24. ໃນບົດທີ 19 ພຣະເຈົ້າຊົງຕັດສັ່ງຕໍ່ໂມເຊໃຫ້ຈັດຕຽມຊົນຊາດອິສຣາເອນເພື່ອເຂົ້າໄປສູ່ພັນທະສັນຍາຂອງພຣະອົງ. ໃນຂໍ້ທີ 3 ພຣະເຈົ້າຊົງຮຽກເອີ້ນໂມເຊໃຫ້ຂຶ້ນໄປເທິງພູເພື່ອຮັບຟັງພຣະດຳຣັດສັ່ງຂອງພຣະອົງ. ຜູ້ຊ່ຽວຊານທາງພຣະຄັມພີຍອມຮັບວ່າເຂົາເຈົ້າບໍ່ສາມາດບອກໄດ້ວ່າແມ່ນຢູ່ຈຸດໃດຂອງພູຊີນາຍ. ອີງຕາມຕາມຄຳບອກເລົ່າທີ່ໄດ້ເວົ້າສືບຕໍ່ກັນມານັ້ນແມ່ນເຈບເລ ມູຊາ ຊຶ່ງມີຄວາມສູງ 7500 ຟີດ ເໜືອລະດັບນຳທະເລ ຊຶ່ງຕັ້ງຢູ່ທາງທິດໃຕ້ຕອນກາງຂອງແຫລມພູຊີນາຍ.

ໃນຖ້ອຍຄຳນີ້ງທີ່ພຣະເຈົ້າໄດ້ຕັດສັ່ງໂມເຊໃຫ້ເຕືອນສະຕິອິສຣາເອນວ່າ ພຣະອົງອົງເຮັດຫຽັງແດ່ຕໍ່**ຄົນເອຢິບ** ຊຶ່ງຮວມທັງຫາຍະນະ10 ປະການ ຊຶ່ງມ້ວນທ້າຍດ້ວຍການຕາຍຂອງລູກຊາຍກົກ ແລະເຮັດໃຫ້ພວກເອຢິບຈົມນ້ຳຕາຍທີ່ທະເລແດງ. ແລ້ວພຣະເຈົ້າຊົງຕັດອີກຄຳນີ້ງວ່າ "**ເຮົາຈະຍົກພວກເຈົ້າຂຶ້ນດັ່ງນົກອິນຊີ**" ເພື່ອເປັນການເຕືອນສະຕິພວກອິສຣາເອນເຖີງເຫດການ ໂດຍຜ່ານການຄຸ້ມຄອງແລະນຳພາໄພ່ພົນຂອງພຣະອົງ, ການຫ້າງຫາສິ່ງທີ່ຈຳເປັນໃຫ້ຫລັງຈາກທີ່ເຂົາເຈົ້າອອກຈາກປະເທດເອຢິບ. ອິສຣາເອນຍອມຮັບພຣະຣາຊກິດຕ່າງໆ ທີ່ພຣະເຈົ້າຊົງກະທຳເພື່ອເຂົາເຈົ້າ ຊຶ່ງຈຳເປັນທີ່ເຂົາເຈົ້າຈະຕ້ອງເຂົ້າໃຈເຖີງພັນທະສັນຍາທີ່ພຣະອົງຊົງສັນຍາໄວ້ ແລະເງື່ອນໄຂຕ່າງໆ ທີ່ເຂົາເຈົ້າຕ້ອງປະຕິບັດຕາມ.

ພັນທະສັນຍາທີ່ພຣະເຈົ້າຊົງກ່າວເຖີງນັ້ນແມ່ນ ຄຳສັນຍາອັນຍາວນານຂອງພຣະອົງທີ່ອິສຣາເອນຈະຕ້ອງຟັງໃຫ້ດີເພື່ອຈະຮັກສາພັນທະສັນຍາທີ່ພຣະອົງຊົງຈັດຕຽມໄວ້ໃຫ້ນັ້ນ. ເຖີງແມ່ນພຣະເຈົ້າຊົງໄດ້ກ່າວວ່າ "**ຫມົດທັງໂລກເປັນຂອງພຣະອົງ**" ແຕ່ພຣະອົງຊົງຖືວ່າຊົນຊາດອິສຣາເອນເປັນຊົນຊາດພິເສດ. ຕາມຄວາມຄິດຂອງພວກເຮົາ, ຖ້າເຮົາເລືອກເອົາສິ່ງນີ້ງ ແມ່ນຈະຕ້ອງໄດ້ຖິ້ມສິ່ງອື່ນໆ. ແຕ່ພຣະເຈົ້າບໍ່ເປັນເຊັ່ນນັ້ນ ພຣະອົງຊົງເລືອກເອົາຊົນຊາດອິສຣາເອນເພື່ອຈະເກີດຜົນປໂຍດແກ່ຊາດອື່ນໆ ໃນໂລກ, ພຣະອົງບໍ່ໄດ້ປະຖິ້ມຊົນຊາດເຫລົ່ານັ້ນ.

ຖ້ອຍຄຳທີ່ວ່າ "**ເປັນປະໂຣຫິດຜູ້ຮັບໃຊ້ພຣະອົງ ແລະ ເປັນໄພ່ພົນບໍຣິສຸດຂອງພຣະອົງ**" ຊີ້ໃຫ້ເຫັນວ່າອິສຣາເອນຕ້ອງດຳເນີນຊີວິດຕາມພັນທະສັນຍາກັບພຣະເຈົ້າ. "**ຣາຊອານາຈັກ**" ຫມາຍເຖີງພົມແດນທີ່ພຣະເຈົ້າຊົງປົກຄອງຄືຄວາມເປັນພຣະເຈົ້າຂອງພຣະອົງທີ່ຢູ່ເໜືອບັນດາໄພ່ພົນຂອງພຣະອົງ. ໂດຍຜ່ານທາງພຣະໂລຫິດຂອງອົງພຣະເຢຊູ ບັນດາຜູ້ທີ່ເຊື່ອສາມາດເຂົ້າໄປສູ່ພັນທະສັນຍາໃໝ່ກັບພຣະເຈົ້າໄດ້ (ລກ. 22:20; ຮຣ 8:8-12) ພວກເຮົາເປັນເຊື້ອຊາດທີ່ພຣະອົງຊົງເລືອກ. ເປັນປະໂຣຫິດຂອງພຣະອົງ ( 1 ປຕ. 2:9 ) ໂດຍການຍອມຖວາຍຕົວໃຫ້ແກ່ອົງພຣະຄຣິດ, ບັນດາຜູ້ທີ່ເຊື່ອມີສິດທິແລະມີຄວາມຮັບຜິດຊອບໃນພັນທະສັນຍາແຫ່ງຊີວິດ, ຮັບເອົາພຣະປະສົງອັນພິເສດ ສົມກັບເປັນໄພ່ພົນຂອງພຣະອົງ.

## 2. <u>ອຸທິດຕົນແກ່ພຣະເຈົ້າເທົ່ານັ້ນ</u> (ອົບພະຍົບ 20:3-11 )

ພຣະບັນຍັດ 10 ປະການທີ່ພວກເຮົາຮູ້ຈັກ ຊຶ່ງທຳອິດພຣະເຈົ້າຊົງໄດ້ປະທານໃຫ້ນັ້ນ ຢູ່ໃນພຣະທັມອົບພະຍົບ 20:1-17. ມີ 2 ຢ່າງທີ່ແຕກຕ່າງຈາກພຣະບັນຍັດອື່ນໆ ທີ່ພຣະອົງຊົງປະທານໃຫ້ພວກອິສຣາເອນທີ່ພູຊີນາຍ. ປະການທຳອິດ, ແມ່ນພຣະບັນຍັດທີ່ເອີ້ນວ່າ apodictic laws ເປັນພຣະບັນຍັດທີ່ເຈາະຈົງແນ່ນອນ ບໍ່ມີຂໍ້ແມ້ຫລືທາງອື່ນເລືອກເໝືອນພຣະບັນຍັດອື່ນໆ . ປະການທີສອງ, ເປັນພຣະບັນຍັດທີ່ພຣະເຈົ້າຊົງປະທານໃຫ້ແກ່ຊົນຊາດອິສຣາເອນໂດຍກົງ ຊຶ່ງພຣະເຈົ້າໃຫ້ໂມເຊເປັນຜູ້ເວົ້າຕາງພຣະອົງ. ພຣະບັນຍັດເຫລົ່ານີ້ມາຈາກພັນທະສັນຍາທີ່ອິສຣາເອນມີຄວາມສັມພັນກັບພຣະເຈົ້າ-ຕໍ່ມາໄດ້ກາຍເປັນກົດຫມາຍຂັ້ນພື້ນຖານຂອງບັນດາປະເທດຕາເວັນຕົກ.

ພຣະບັນຍັດໃນ ອົບພະຍົບ 20:1-18 ໄດ້ເລງໃສ່ພຣະເຈົ້າໂດຍກົງ. ໄພ່ພົນຂອງພຣະເຈົ້າຕ້ອງນັບຖືພຣະເຈົ້າອົງດຽວ ( ພຣະເຈົ້າອົງດຽວ ບໍ່ແມ່ນພຣະອື່ນໆ ) ໃນຖານະທີ່ຂ້າພະເຈົ້າເປັນອາຈານສອນໂຮງຮຽນພຣະຄຣິສຕະທັມຄັມພີ ຂ້າພະເຈົ້າໄດ້ສຶກສາເຖີງແນວຄວາມຄິດຂອງສາສນາຕ່າງໆ. ຄວາມຄິດນີ້ງທີ່ຂ້າພະເຈົ້າໄດ້ຈົດບັນທຶກໄວ້ແມ່ນ

ສາສນາໃໝ່ໆ ໃນໂລກທີ່ພະຍາຍາມເຂົ້າໂຮມກັນ ຄືຍອມຮັບຊຶ່ງກັນແລະກັນ ເອົາຄວາມເຊື່ອທີ່ມາຈາກຫລາຍໆ ສາສ ນາເຂົ້າປະສົມກັນ. ສາສນາຂອງຍຸກໃໝ່ເຫລົ່ານີ້ໄດ້ຕົກຢູ່ໃນກໍຣະນີທີ່ກ່າວມານັ້ນ ຍົກຕົວຢ່າງເຊັ່ນ ພວກແຊນເຕີເຣັຽ Santeria ມີສ່ວນຮ່ວມປະສົມກັບແຄທໂຕລິກ, ວູດູ, ແລະພວກນັບຖືວິນຍານຕ່າງໆ. ການກະທຳດັ່ງກ່າວນີ້ ໄດ້ຫ້າມໄວ້ຢ່າງເຂັ້ມງວດໃນພຣະບັນຍັດ 10 ປະການຂໍ້ທຳອິດ.

ຂໍ້ກ່າວຫ້າມບໍ່ໃຫ້ໂຄຣົບຮູບປັ້ນ ໄດ້ກ່າວໄວ້ວ່າພວກເຮົາຈະນະມັສການພຣະເຈົ້າແຕ່ອົງແທ້ແຕ່ອົງດຽວຢ່າງໃດ. ວັດຖຸສິ່ງຂອງຕ່າງໆຈະບໍ່ສາມາດຕາງໜ້າທົບແທນພຣະອົງໄດ້. ພຣະອົງຊົງເປີດເຜີຍພຣະອົງເອງທາງພຣະທັມ ແລະອົງພຣະເຢຊູພຣະອົງດຽວເທົ່ານັ້ນໃນໂລກນີ້ທີ່ຕາງໜ້າພຣະອົງໄດ້. ບໍ່ມີຜູ້ໃດແລະສິ່ງໃດທີ່ຈະສາມາດເປັນຜູ້ຕາງໜ້າພຣະອົງໄດ້ ເພື່ອໃຫ້ພວກເຮົານະມັສການ.

ການ "**ໃຊ້ຊື່ຂອງພຣະເຈົ້າໄປໃນທາງທີ່ຜິດ**" ແມ່ນການຫ້າມບໍ່ໃຫ້ເຮັດສາມຢ່າງໃນສມັຍພຣະຄັມພີ ແລະໃນສມັຍນີ້. ຢ່າໃຊ້ພຣະນາມຂອງພຣະເຈົ້າ ( ຮວມທັງພຣະເຈົ້າພຣະບິດາແລະພຣະເຢຊູ) ໃນທາງເວດມົນຫລືເປັນໝໍຜີ (ອ່ານພຣະທັມ ກິຈການ 19:13-14), ເພື່ອພິສູດຄວາມຈິງຕ່າງໆ, ຫລືໝິ່ນປມາດໂດຍຮູ້ເທົ່າບໍ່ເຖິງການ.

ການນັບຖື "ວັນສະບາໂຕ" ພວກເຮົາຈະບໍ່ປ່ຽນກົດບັນຍັດໂດຍສະເພາະແມ່ນວັນສະບາໂຕຂອງພວກຢິວມາເປັນວັນອາທິດ ຂອງຄຣິສຕຽນ. ອົງພຣະເຢຊູຊົງຕຳໜິກົດບັນຍັດດັ່ງກ່າວ. ພຣະເຢຊູຊົງກ່າວວ່າ "**ວັນຊະບາໂຕຊົງຕັ້ງໄວ້ເພື່ອມະນຸດ**" ແລະໃນຂໍ້ຕໍ່ໄປພຣະອົງຊົງກ່າວຕໍ່ໄປວ່າ "**ເພາະເຫດນັ້ນບຸດມະນຸດຈຶ່ງເປັນເຈົ້າຂອງວັນຊະບາໂຕເໝືອນກັນ**" ( ມາຣະໂກ 2:27-28) ຄຣິສຕະຈັກໃນສັຕວັດທຳອິດໄດ້ນັບຖື ວັນຕົ້ນສັປດາ (ວັນອາທິດ) ເປັນວັນລະນຶກເຖິງການຊົງຄືນພຣະຊົນຂອງອົງພຣະຄຣິດ ( ກິຈການ 20:7; 1 ໂກຣິນໂທ 16:2 ) ໃນຂໍ້ຄວາມທີ່ກ່າວໄວ້ໃນຫລັກຄວາມເຊື່ອຂອງຄະນະບັບຕິສ (2000) ວ່າ ວັນອາທິດສົມຄວນເປັນວັນນະມັສການແລະອຸທິດຕົນດ້ານຈິດວິນຍານທັງເປັນການສ່ວນຕົວແລະສາທາຣະນະ. ກິຈກັມຕ່າງໆ ໃນວັນຂອງພຣະຜູ້ເປັນເຈົ້າ ຄວນຈະເໝາະສົມກັບຄວາມສຳນຶກເຫັນຊອບຂອງຄຣິສຕຽນ ພາຍໃຕ້ພຣະເຢຊູຄຣິດຜູ້ຊົງເປັນພຣະຜູ້ເປັນເຈົ້າ.

ໃນຖານະທີ່ເປັນຄຣິສຕຽນ, ພຣະເຈົ້າຊົງປົດປ່ອຍພວກເຮົາໃຫ້ຫລຸດພົ້ນຈາກບາບແລ້ວ. ພວກເຮົາໄດ້ເຂົ້າໄປສູ່ພັນທະສັນຍາໃໝ່ໂດຍທາງພຣະໂລຫິດຂອງພຣະຄຣິດ. ການເປັນຜູ້ມີສ່ວນຮ່ວມໃນພຣະສັນຍາໃໝ່ນີ້, ພວກເຮົາຕ້ອງນະມັສການພຣະເຈົ້າພຣະອົງດຽວເທົ່ານັ້ນ, ຖວາຍກຽດແດ່ພຣະນາມພຣະອົງ, ແລະນັບຖືວັນອາທິດເປັນວັນພິເສດສຳລັບການນະມັສການແລະການພັກຜ່ອນ.

## 3. <u>ຊົງບັນຊາໃຫ້ດຳເນີນຊີວິດຕາມທາງພຣະເຈົ້າ</u>( ອົບພະຍົບ 20:12-17 )

ການຊົງປະທານພຣະບັນຍັດໃຫ້ພວກອິສຣາເອນ ກ່ຽວກັບຄວາມສັມພັນຣະຫວ່າງມະນຸດຕໍ່ມະນຸດ. ພຣະເຈົ້າຊົງເລີ້ມຕົ້ນຈາກຄອບຄົວ. ພຣະບັນຍັດທີ່ວ່າ "**ຈົ່ງໃຫ້ກຽດບິດາມານດາ**" ເປັນບັນຍັດພິເສດ 2 ປະການ. ເປັນພຣະບັນຍັດທີ່ສັ່ງໃຫ້ຜູ້ເປັນລູກຍອມເຊື່ອຟັງ. ຄວາມຄິດນີ້ແມ່ນຜູ້ເປັນລູກຕ້ອງຍອມເຊື່ອຟັງພໍ່ແມ່ ຊຶ່ງພໍ່ແມ່ກໍຍອມເຊື່ອຟັງພຣະບັນຍັດທັງໝົດຂອງພຣະເຈົ້າ. ພໍ່ແມ່ຈະຕ້ອງເປັນຜູ້ນຳພາລູກໆ ຮັກສາພັນທະສັນຍາຂອງພຣະເຈົ້າຈົນພວກລູກໆໃຫຍ່ເຖິງກະສຽນ. ພວກຢິວໄດ້ກະທຳເຊັ່ນນີ້ເປັນເວລາຫລາຍສັຕວັດຖືເອົາເປັນການສລອງຢ່າງນຶ່ງທີ່ເອີ້ນວ່າ "ບາ ມິດຊະວາ" ( Bar Mitzvah ) ຊຶ່ງໝາຍເຖິງການປ່ຽນຈາກວັຍເດັກຜູ້ຊາຍມາເປັນຜູ້ໃຫຍ່ທີ່ເພິ່ງໃນພຣະເຈົ້າໂດຍກົງ. ສຳລັບຄວາມໝາຍອີກຢ່າງນຶ່ງຂອງພຣະບັນຍັດນີ້ແມ່ນການມີອາຍຸຍືນ. ຄວາມຄິດທີ່ວ່າການເປັນພໍ່ແມ່ທີ່ອຸທິດຕົນຕໍ່ພຣະເຈົ້ານັ້ນເປັນທາງນຳໄປສູ່ ການມີສຸຂພາບດີ, ຄວາມອຸດົມຮັ່ງມີ, ແລະຄວາມຜາສຸກ ແລະເຂົ້າໃຈຄຳຂວັນໃນປຶ້ມພຣະທັມສຸພາສິດ. ພຣະບັນຍັດນີ້ຖືວ່າເປັນພຣະບັນຍັດປະຈຳຊາດ. ຊາດທີ່ມີລູກຫລານທີ່ຍອມເຊື່ອຟັງ ກໍຈະລ້ຽງດູລູກຫລານໃນຍຸກຕໍ່ໄປໃຫ້ເປັນຜູ້ທີ່ຢ້ານຢຳພຣະເຈົ້າແລະເກັບກ່ຽວຄຳສັນຍາຕ່າງໆ, ເປັນຊາດທີ່ມີອາຍຸຍືນຍາວ.

ພຣະບັນຍັດອີກສາມຂໍ້ໄດ້ອະທິບາຍເປັນພາສາເຮັບເຣີທີ່ສາມາດເຂົ້າໃຈໄດ້ງ່າຍໆ ວ່າ "ຢ່າຂ້າຄົນ, ຢ່າລ່ວງປະເວນີ, ຢ່າລັກ! ສອງຂໍ້ສຸດທ້າຍເປັນຂໍ້ຫ້າມ. ພຣະບັນຍັດຂອງພຣະເຈົ້າເປັນຄຳເວົ້າບໍ່ເລິກ, ເຂົ້າໃຈງ່າຍ, ແລະບໍ່ອ້ອມຄ້ອມ. ຈຶ່ງບໍ່ສົມຄວນຈະຕີຄວາມໝາຍຜິດ. ພໍ່ແມ່ໃນສມັຍນີ້ອາດຈະຖາມລູກທີ່ຍອມເຊື່ອຟັງວ່າ "ສ່ວນໃດຂອງ

ຄຳວ່າ "ບໍ່" ທີ່ເຈົ້າບໍ່ເຂົ້າໃຈ?" ພຣະບັນຍັດຫ້າຂໍ້ສຸດທ້າຍທີ່ກ່າວມານັ້ນແມ່ນຢູ່ເທິງພື້ນຖານແຫ່ງຄວາມໂຄຣົບຂອງຜູ້ເປັນພໍ່ແມ່ ຢູ່ໃນຄວາມໝາຍທີ່ວ່າເປັນຄອບຄົວທີ່ຢ້ານຢຳພຣະເຈົ້າ, ຈຸດປະສົງຂອງພຣະບັນຍັດນັ້ນແມ່ນເຮັດໃຫ້ສັງຄົມໄດ້ຮັບການນັບຖື ເພື່ອຫລີກເວັ້ນຈາກການຂ້າ, ລ່ວງປະເວນີ, ລັກ, ຕົວະ ແລະໂລບ.

ເຖິງແມ່ນວ່າພຣະບັນຍັກ 10 ປະການໄດ້ກ່າວຫ້າມໃນທາງລົບ, ແຕ່ຈະສົ່ງຜົນດີໃນທາງບວກຕໍ່ຫລັກການດຳເນີນຊີວິດ. ໃນຖານະທີ່ເປັນຄຣິສຕຽນ, ພວກເຮົາຕ້ອງໃຫ້ກຽດບິດາມານດາຕລອດຊີວິດຂອງເຮົາ. ຫລາຍໄປກວ່ານັ້ນ, ພວກເຮົາຕ້ອງໃຫ້ກຽດຄົນອື່ນໆ ທີ່ຢູ່ອ້ອມຮອບເຮົາເຊັ່ນດຽວກັນ. ພວກເຮົາຕ້ອງຍົກສູງຄຸນຄ່າແຫ່ງຊີວິດ, ການສົມຣົດ, ຊັບສົມບັດ, ຊື່ສຽງ, ແລະສິ່ງຂອງຕ່າງໆ ຂອງຄົນອື່ນຫລາຍກວ່າຄວາມປາຖນາອັນເຫັນແກ່ໂຕຂອງເຮົາເອງ. ໂປໂລໄດ້ກ່າວຫລັກປະຕິບັດນີ້ໄວ້ໃນພຣະທັມຟີລິບປອຍ 2:3 ວ່າ *"ຢ່າເຮັດສິ່ງໃດໃນທາງຊິງດີຫລືຖືດີກັນ ແຕ່ຈົ່ງຖ່ອມໃຈລົງ ຖືວ່າຄົນອື່ນດີກວ່າຕົນ."*

ຄຣິສຕຽນຄວນຈະຮັບຮູ້ເພີ້ມຂຶ້ນເຣື່ອງຄວາມຂັດແຍ່ງການຕິດຕັ້ງພຣະບັນຍັດ 10 ປະການຕາມສະຖານທີ່ສາທາຣະນະ. ສານສູງສຸດຂອງອະເມຣິກາໄດ້ມີການບັນທຶກໄວ້ວ່າ ພຣະບັນຍັດ 10 ປະການຈະບໍ່ເຫັນຕໍ່ໄປອີກ, ຈະເປັນແຕ່ພຽງປະວັດສາດແລະຈະບໍ່ເປັນພື້ນຖານຂອງກົດໝາຍໃນຣະບົບການປົກຄອງຂອງປະເທດອີກຕໍ່ໄປ, ແຕ່ຈະເປັນພຽງສົມບັດຂອງສາສນາເທົ່ານັ້ນ. ດັ່ງນັ້ນການຕັ້ງສະແດງຈຶ່ງເປັນການລະເມີດຕໍ່ກົດໝາຍຣັຖທັມມູນ ຊຶ່ງຖືວ່າເປັນພຽງໂຄງຮ່າງຂອງວັດຖຸເທົ່ານັ້ນ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org translated by PS.